# ການລົງຄະແນນສຽງໂດຍມີປະຫວັດອາຊະຍາກຳ

VOTE 2026

*ປະຫວັດອາຊະຍາກຳຂອງທ່ານບໍ່ມີຜົນກະທົບຕໍ່ສິດທິຂອງທ່ານໃນການລົງຄະແນນສຽງໃນລັດ Minnisota ເວັ້ນເສຍແຕ່ວ່າທ່ານກຳລັງຖືກຄຸມຂັງເພື່ອປະຕິບັດໂທດທາງອາຍາ ຢູ່ໃນຂະນະນີ້ ເທົ່ານັ້ນ.*

## *ການລົງຄະແນນສຽງຫຼັງຈາກການຖືກຕັດສິນວ່າມີຄວາມຜິດທາງອາຍາ*

ນັບຕັ້ງແຕ່ວັນທີ 1 ມິຖຸນາ 2023 ເປັນຕົ້ນໄປ, ທ່ານສາມາດລົງຄະແນນສຽງໄດ້ຕາບໃດທີ່ທ່ານບໍ່ໄດ້ຖືກຄຸມຂັງເພື່ອປະຕິບັດໂທດທາງອາຍາຢູ່ໃນຂະນະນີ້, ເປັນພົນລະເມືອງສະຫະລັດ, ມີອາຍຸຢ່າງໜ້ອຍ 18 ປີໃນວັນເລືອກຕັ້ງ ແລະ ເປັນຜູ້ຢູ່ອາໄສໃນລັດ Minnisota ຢ່າງໜ້ອຍ 20 ມື້.

## *ການລົງຄະແນນສຽງຫຼັງຈາກສິດຂອງທ່ານໄດ້ຮັບການຟື້ນຟູ*

ຖ້າທ່ານຖືກຄຸມຂັງເພື່ອປະຕິບັດໂທດທາງອາຍາ, ທ່ານສາມາດລົງຄະແນນສຽງໄດ້ເມື່ອການຄຸມຂັງສິ້ນສຸດລົງແລ້ວ. ເມື່ອສິດໃນການລົງຄະແນນສຽງຂອງທ່ານໄດ້ຮັບການຟື້ນຟູຄືນແລ້ວ, ທ່ານຕ້ອງໄດ້ລົງທະບຽນເພື່ອລົງຄະແນນສຽງ. ທ່ານສາມາດລົງທະບຽນໄດ້:

### *ວັນທີຕ່າງໆໃນປີ 2026*

***ລົງຄະແນນສຽງລ່ວງໜ້າ***
*26 ມິຖຸນາ - 10 ສິງຫາ*

*ລົງທະບຽນລ່ວງໜ້າ*
*ພາຍໃນວັນທີ 21 ກໍລະກົດ*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, 11 ສິງຫາ*

***ລົງຄະແນນສຽງລ່ວງໜ້າ***
*18 ກັນຍາ - 2 ພະຈິກ*

*ລົງທະບຽນລ່ວງໜ້າ*
*ພາຍໃນວັນທີ 13 ຕຸລາ*

***ມື້ເລືອກຕັ້ງ***
*ວັນອັງຄານ, 3 ພະຈິກ*

- ທາງອອນລາຍທີ່ ***mnvotes.gov/register***
- ສົ່ງແບບຟອມແບບເປັນເອກະສານກັບຄືນທາງໄປສະນີໄປທີ່ສຳນັກງານເລຂາທິການລັດ Minnesota ຫຼື ຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານ
- ໄປດ້ວຍຕົນເອງທີ່ຫ້ອງການການເລືອກຕັ້ງປະຈຳຄາວຕີ້ຂອງທ່ານ

*ສືບຕໍ່ຢູ່ດ້ານຫຼັງ...*

**ສຳນັກງານເລຂາທິການລັດ Minnisota**

*mnvotes.gov • ໂທ: 1-877-600-VOTE • ຂໍ້ຄວາມ: 651-217-3862*

# ການລົງຄະແນນສຽງໂດຍມີປະຫວັດອາຊະຍາກຳ

## *ຂ້າພະເຈົ້າສາມາດລົງຄະແນນສຽງໄດ້ບໍ່ ຖ້າ...*

| | |
|---|---|
| ຂ້າພະເຈົ້າຖືກກ່າວຫາ ຫຼື ຖືກຕັດສິນວ່າມີຄວາມຜິດໃນການກະທຳຜິດຂັ້ນເບົາບາງ ຫຼື ການກະທຳຜິດຂັ້ນຮ້າຍແຮງ? | ໄດ້ |
| ຂ້າພະເຈົ້າຕິດຄຸກ, ແຕ່ບໍ່ໄດ້ປະຕິບັດໂທດທາງອາຍາຢູ່ໃນຂະນະນີ້? | ໄດ້ |
| ຂ້າພະເຈົ້າຖືກກ່າວຫາວ່າກະທຳຜິດທາງອາຍາ, ແຕ່ຍັງບໍ່ທັນຖືກຕັດສິນລົງໂທດ? | ໄດ້ |
| ຂ້າພະເຈົ້າໄດ້ຮັບການໂຈະການຕັດສິນໄວ້? | ໄດ້ |
| ຂ້າພະເຈົ້າຖືກຕັດສິນວ່າມີຄວາມຜິດທາງອາຍາໃນລັດອື່ນ ແຕ່ຂ້າບໍ່ໄດ້ຖືກຄຸມຂັງຢູ່ໃນຂະນະນີ້? | ໄດ້ |
| ຂ້າພະເຈົ້າຢູ່ໃນໄລຍະປ່ອຍຕົວມາທົດລອງ ຫຼື ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂຫຼັງຈາກຖືກຕັດສິນວ່າມີຄວາມຜິດທາງອາຍາ? | ໄດ້ |
| ຂ້າພະເຈົ້າຖືກຕັດສິນວ່າມີຄວາມຜິດທາງອາຍາ ແລະຂ້າພະເຈົ້າກຳລັງຢູ່ໃນຂັ້ນຕອນການປ່ອຍຕົວມາເຮັດວຽກຢູ່ໃນຂະນະນີ້? | ໄດ້ |
| ຂ້າພະເຈົ້າອາໄສຢູ່ໃນສູນຟື້ນຟູຜູ້ພົ້ນໂທດໃນນາມເປັນທາງເລືອກຂອງລັດຖະບານກາງແທນທີ່ການກັກຂັງກ່ອນການພິຈາລະນາຄະດີ, ການປ່ອຍຕົວພາຍໃຕ້ການຄວບຄຸມດູແລຂອງລັດ ຫຼື ຈຸດປະສົງອື່ນໆທີ່ບໍ່ແມ່ນການກັກຂັງ?<br>**ທ່ານຄວນປຶກສາກັບເຈົ້າໜ້າທີ່ຄວບຄຸມການປ່ອຍຕົວມາທົດລອງຂອງທ່ານ ຖ້າທ່ານມີຄຳຖາມໃດໆວ່າທ່ານຈະຖືກພິຈາລະນາວ່າ "ຖືກຄຸມຂັງ" ຫຼື ບໍ່ ໃນຂະນະທີ່ອາໄສຢູ່ສູນຟື້ນຟູຜູ້ພົ້ນໂທດ.** | ໄດ້ |
| ຂ້າພະເຈົ້າກຳລັງຢູ່ໃນຄຸກເພື່ອປະຕິບັດໂທດທາງອາຍາຢູ່ໃນຄຸກ, ຄ້າຍຄຸມຂັງ ຫຼື ສູນຟື້ນຟູຜູ້ພົ້ນໂທດ (ສຳລັບການໂທດທາງອາຍາຂັ້ນລັດຖະບານກາງ)? | ບໍ່ |